# ໝວດ 7

ບົດທີ 16 ຄຳກ່າວຂອງຊະເຕຟາໂນເລື່ອງປະຫວັດໃນພະຄຳພີເດີມ

ບົດທີ 17 ການປະກາດໃນແຂວງຢູດາ ແລະ ຊາມາເລຍ

ບົດທີ 18 ຟີລິບປະກາດພະທຳໃຫ້ໄທເອທີໂອເປຍຟັງ

## ເປົ້າໝາຍ

ເມື່ອທ່ານຮຽນ ໝວດນີ້ແລ້ວ ທ່ານຈະຮູ້ດັ່ງຕໍ່ໄປນີ້:

1. ຈະຮູ້ເລື່ອງທີ່ຊະເຕຟາໂນກ່າວແກ້ຕົວ ແລະຈະຮູ້ຈຸດ ໝາຍຂອງຊະເຕຟາໂນໃນການນັ້ນ. ຈະຮູ້ຄຳກ່າວຫາຕໍ່ເພິ່ນສອງປະການ ເລື່ອງຄຳຕອບຂອງຊະເຕຟາໂນສອງປະການ ແລະເລື່ອງທ່າທີຂອງເພິ່ນໃນເວລາທີ່ຈວນຈະຕາຍ.
2. ຈະຮຽນຮູ້ເລື່ອງ 6 ສະໄໝໃນພະຄຳພີເດີມ.
3. ຈະຮູ້ສະຫລູບເລື່ອງການຂະຫຍາຍຂອງຄຼິດສະຕະຈັກທີ່ເລີ້ມຕົນໃນກຸງເຢລູຊາເລັມເຂົາແຂວງຢູດາແລະຊາມາເລຍ ໃນ ກຈກ ບົດ 1 ເຖິງ ບົດ 7 ທັງຈະຮູ້ເລື່ອງຜູ້ທີ່ປ່າວປະກາດໃນແຂວງຊາມາເລຍ.
4. ຈະຮຽນຮູ້ຄົນຜູ້ ໜຶ່ງທີ່ສະແຫວງຫາອຳນາດຂອງພະວິນຍານບໍລິສຸດ ເພື່ອຈະໄດ້ປະໂຫຍດສ່ວນຕົວ. ຈະຮຽນຮູ້ເລື່ອງທາງສອງເສັ້ນທີ່ເຮົາອາດຈະຫຼົງຜິດໄດ້ໃນການສະແຫວງຫາອຳນາດຂອງພະວິນຍານບໍລິສຸດ.
5. ຈະຮຽນຮູ້ເລື່ອງວິທີປ່າວປະກາດລະຫວ່າງບຸກຄົນຕໍ່ບຸກຄົນຈາກຟີລິບທີ່ກ່າວພະທຳໃຫ້ຊາວເອທີໂອເປຍຜູ້ ໜຶ່ງ ແລະ ຫຼັກການ 9 ປະການໃນການປ່າວປະກາດຢ່າງນັ້ນ.